ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະການລົງທຶນ

ເລກທີ ----0572 /ຜທ.ຮມສ-ປປກ.02

ນະຄອນຫຼວງວຽງຈັນ, ວັນທີ 20 MAR 2017

ຮຽນ: - ທ່ານຮອງນາຍົກລັດຖະມົນຕີ ທີ່ນັບຖືຢ່າງສູງ,

- ບັນດາທ່ານລັດຖະມົນຕີ, ທ່ານເຈົ້າຄອງ ແລະ ບັນດາທ່ານເຈົ້າແຂວງ ທີ່ນັບຖື,

ເລື່ອງ: ການສະຫຼຸບສັງລວມແຜນລາຍຈ່າຍໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ (ຊ.ກ.ພ) ເຂົ້າໃນແຜນປະຈໍາປີ 2017

- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ເລກທີ 374/ນຍ, ລົງວັນທີ 22 ຕຸລາ 2007 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງແຜນການ ແລະການລົງທຶນ
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ເລກທີ 75/ນຍ, ລົງວັນທີ 20 ມີນາ 2009 ວ່າດ້ວຍການຄຸ້ມຄອງ ແລະ ນໍາໃຊ້ການຊ່ວຍເຫຼືອທາງການ ເພື່ອການພັດທະນາ
- ອີງຕາມການຊີ້ນໍາຂອງສະພາແຫ່ງຊາດໃນຄັ້ງວັນທີ 20 ມັງກອນ 2017 ວ່າດ້ວຍການສັງລວມແຜນໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ເຂົ້າໃນມະຕິຂອງກອງປະຊຸມສະພາທ້ອງຖິ່ນ ປະຈໍາປີ 2017

ກະຊວງແຜນການ ແລະ ການລົງທຶນ ຂໍຖືເປັນກຽດຢ່າງສູງແຈ້ງມາຍັງທ່ານ ຊາບວ່າ: ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດການລາຍງານ ແລະສັງລວມແຜນລາຍຈ່າຍໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ປະຈໍາປີ 2017 ມີຄວາມເປັນເອກະພາບ ແລະ ຖືກຕ້ອງຕາມຂໍ້ມູນຕົວຈິງ, ຈຶ່ງສະເໜີມາຍັງທ່ານປະຕິບັດດັ່ງນີ້:

1. ໃຫ້ບັນດາກະຊວງ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຈົດກ່າຍເອົາແຜນລາຍຈ່າຍຂອງໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ທີ່ບໍ່ມີທຶນສົມທົບ ແລະມີແຜນລົງທຶນຕົວຈິງໃນປີ 2017 ເຂົ້າໃນແຜນລາຍຈ່າຍປະຈໍາປີ 2017 ໃຫ້ຄົບຖ້ວນ, ແລະ ບັນດາໂຄງການອື່ນໆທີ່ຍັງບໍ່ທັນໄດ້ລາຍງານແມ່ນໃຫ້ບັນຈຸເຂົ້າຢູ່ໃນແຜນດັດແກ້ ໃນເດືອນເມສາ 2017;

2. ສໍາລັບໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ທີ່ມີທຶນສົມທົບລັດຖະບານ ແມ່ນຢັ້ງຢືນເອົາຕາມທີ່ໄດ້ຢັ້ງຢືນມາກ່ອນໜ້ານີ້ນັ້ນ ໂດຍໄດ້ຜ່ານການຮັບຮອງຈາກສະພາແຫ່ງຊາດແລ້ວຕາມບ້ວງເງິນລົງທຶນ 3,300 ຕື້ກີບນັ້ນ, ສ່ວນໂຄງການໃດທີ່ຍັງບໍ່ທັນໄດ້ນໍາສະເໜີ ແມ່ນໃຫ້ເອົາເຂົ້າໃນແຜນປະຈໍາປີ 2018;

3. ສໍາລັບໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ທີ່ເປັນປະເພດເງິນກູ້ຢືມ (ໃນເງື່ອນໄຂຜ່ອນຜັນ) ແມ່ນໃຫ້ປະສານກັບກະຊວງຂະແໜງການທີ່ກ່ຽວຂ້ອງ ແລະກະຊວງການເງິນ ເພື່ອໄຈ້ແຍກໃຫ້ໄດ້ມູນຄ່າໂຄງການ ແລະແຜນລາຍຈ່າຍຕົວຈິງທີ່ຈະປະຕິບັດຢູ່ທ້ອງຖິ່ນ ແລ້ວຈຶ່ງເອົາເຂົ້າໃນແຜນລາຍຈ່າຍຂອງທ້ອງຖິ່ນ. ແຕ່ໃນກໍລະນີບໍ່ສາມາດໄຈ້ແຍກໄດ້ແມ່ນໃຫ້ເອົາເຂົ້າໃນບັນຊີລາຍຈ່າຍຂອງກະຊວງຂະແໜງການ;

4. ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາທີ່ຈັດຕັ້ງປະຕິບັດຜ່ານອົງການຈັດຕັ້ງສາກົນ ແລະອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ບໍ່ມີທຶນສົມທົບ ແມ່ນບໍ່ທັນໃຫ້ເອົາເຂົ້າແຜນລາຍຈ່າຍຂອງທ້ອງຖິ່ນຖ້າຫາກບໍ່ສາມາດ

ສະແດງໃຫ້ເຫັນໄດ້ລາຍຈ່າຍລະອຽດທີ່ຈະລົງທ້ອງຖິ່ນ. ແຕ່ໃນກໍລະນີສາມາດໄຈ້ແຍກໃຫ້ເຫັນແຜນລາຍຈ່າຍລະອຽດໄດ້ແມ່ນໃຫ້ເອົາເຂົ້າໃນແຜນລາຍຈ່າຍປະຈຳປີ ເຊິ່ງອາດສະເໜີດັດແກ້ໃນເດືອນ ເມສາ 2017;

5. ການສະຫຼຸບສັງລວມ ແລະການສະເໜີດັດແກ້ແຜນລາຍຈ່າຍໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ ຕ້ອງໄດ້ແຈ້ງມາໃຫ້ ກົມຮ່ວມມືສາກົນ ແລະ ກົມແຜນການ, ກະຊວງແຜນການ ແລະການລົງທຶນ ຊ້າສຸດບໍ່ກາຍ ວັນທີ 30 ມີນາ 2017.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຊີ້ນຳການຈັດຕັ້ງປະຕິບັດຕາມທາງຄວນດ້ວຍ.

ລັດຖະມົນຕີ

ດຣ. ສຸພັນ ແກ້ວມີໄຊ

<u>ໝາຍເຫດ:</u>

- ສຳເນົານຳສົ່ງ ຫ້ອງການ,ບັນດາກະຊວງ ແລະ ອົງການທຽບເທົ່າ
- ຂັດຕິດມາພ້ອມນີ້ ແບບຟອມການສັງລວມ
- ກົມຮ່ວມມືສາກົນ 214062